# ດື່ມເຫຼົ້າລາວທີ່ດີ

ໂດຍ: ໜູ ນິຣາວັນ

ຢາກດື່ມເຫຼົ້າ ຣົສຊາດດີ ໃຫ້ສັງເກດ
ຄືເຫຼົ້າເດັດ ແບບລາວລາວ ຈຶ່ງເຖິງຖອງ
ຢາກໃຫ້ເມົາ ຢ່າງເຖິງໃຈ ໃສ່ຢາດອງ
ຈະເຖິງຖອງ ຊື່ນດວງຈິດ ຣິດມັນແຮງ

ສ່ວນຂອງແກ້ມ ໃຫ້ດີຈິງ ປີ້ງຫົວເປັດ
ແຖວຫຼັກເຈັດ ມີຫຼາຍບ່ອນ ຕອນແລງແລງ
ຫຼືຈະແກ້ມ ແບບໃຈເຢັນ ປີ້ງເອັນແຂງ
ແຖວທາງແບ່ງ ເຂົ້າໜອງຝື ຊື້ຕາມສະບາຍ

ເບັຽສິງຫາ ຫຼືເບັຽຊ້າງ ບໍ່ເດັດດ່ຽວ
ແກ້ວສີຂຽວ ເຮັນນິແກ້ນ ແມ່ນເຖິງໃຈ
ຫຼືເບັຽລາວ ພ້ອມສາວນ້ອຍ ຄອຍຄຽງກາຍ
ດື່ມເຂົ້າໄປ ບໍ່ມີເມົາ ສາວເກື້ອກູນ

ຫຼືຈະໄປ ດື່ມເຫຼົ້າໂທ ເມືອງທ່າແຂກ
ມີຂອງແປກ ຄືເຫຼົ້າໄຫ ເມືອງຫີນບູນ
ດູດເຫຼົ້າໄຫ ສາວຄຽງກາຍ ໃຈອົບອຸ່ນ
ເອົາມີຂູນ ເວົ້າຖືກຄໍ ບໍ່ຖືຕົວ

ນັ່ງດື່ມເບັຽ ຣະວັງເມັຽ ຜູ້ຢູ່ບ້ານ
ເສິກອີຣັກ ຫຼືອີຣ່ານ ບໍ່ເຄີຍກົວ
ແຕ່ເຕັມທີ ອີ່ຢູ່ບ້ານ ຊິຟາດຫົວ
ຣະວັງຕົວ ໄວ້ໃຫ້ດີ ມີບັນຫາ

ຫຼືຈະໄປ ຊອກແວະດື່ມ ແຖວຮ້ານນ້ອຍ
ມີລາບກ້ອຍ ເປັນຂອງແກ້ມ ແຖມສາຍຕາ
ສາວຍິກຈອກ ບອກອ້າຍຍິກ ເບັ່ງຂຶ້ນມາ
ສ່ວນວ່າຂາ ສີຂາວພ່ອງ ນ້ອງຍິກເອງ

ດື່ມສຸຣາ ຖ້າມັກມ່ວນ ຢ່າງຽບຂຶມ
ຢ່ານັ່ງຊຶມ ຍາມສລອງ ຕ້ອງເປີດເພງ
ໂຍກຍ້າຍຂາ ຈັງຫວະໄປ ໃຈຂື້ນເຄງ
ຕາມສຽງເພງ ຫຼືດົນຕຣີ ມີເຮຣາ

ຣິດເຫຼົ້າຂາວ ຂອງເມືອງລາວ ເຖິງກະດູກ
ລືມຄວາມທຸກ ລືມຄວາມເສົ້າ ເຫງົານໍ້າຕາ
ແຕ່ຣະວັງ ຢ່ານັ່ງເລືອ ເກືອເຊົ້າໜມາ
ເຊົ້າຊິວ່າ ເມົານັ່ງລົ້ ຄໍບໍ່ແຂງ

ຖ້າຈະດວນ ເຫຼົ້າກັບສາວ ຕ້ອງໃຊ້ຫວ້ານ
ບໍ່ສະທ້ານ ຈາງຈືດຕໍ່ ຄໍທອງແດງ
ແຕ່ກັບບ້ານ ຕ້ອງທຳງານ ກັບເມັ່ຽແພງ
ຄໍບໍ່ແຂງ ໃຈຕ້ອງບູ້ ສູ້ເຊັ່ນເຄີຍ

ຂໍຢຸດເຊົາ ເວົ້າຄຳກອນ ຍ້ອນຄຶດຢາກ
ສົ້ມທາງປາກ ລົ້ນກະຫາຍ ນໍ້າລາຍເຫີ້ຍ
ຄຶດເຫັນຕອນ ດື່ມເບັ່ຽສົດ ຣົສເຫຼືອເອີ່ຍ
ຢ່າລືມເລີຍ ເລີກເມົາເບັ່ຽ ເມັ່ຽຍັງຄອຍ ຣິຣິຣິ